# ມາດຕະຖານການທ່ອງທ່ຽວແບບນິເວດວິທະຍາ ສຳລັບສະຖານທີ່ພັກແຮມ
# ສະບັບປັບປຸງ 2

ແກ້ໄຂວັນທີ 22 ເມສາ 2024

I. ຄວາມຍືນຍົງ

1) ການຮ່ວມມືຈາກທຸກພາກສ່ວນພາຍໃນສະຖານທີ່ພັກແຮມ

| | ມາດຕະຖານ | ຕົວຊີ້ວັດ |
|---|---|---|
| 1.1-1 | ທ່ານມີລະບົບການຈັດການ ກ່ຽວກັບດ້ານ ສິ່ງແວດລ້ອມ, ສັງຄົມ, ວັດທະນະທຳ, ເສດຖະກິດ, ຄຸນະພາບ, ສິດທິມະນຸດ, ສຸຂະພາບ, ຄວາມປອດໄພ, ການບໍລິຫານ ຄວາມສ່ຽງ ແລະ ວິກິດການ ໃນໄລຍະ ຍາວແບບຍືນຍົງທີ່ເປັນລາຍລັກອັກສອນ ຫລືບໍ່? ແລະ ມີການປັບປຸງຢ່າງຕໍ່ເນື່ອງ ເພື່ອໃຫ້ແທກເໝາະກັບຂະໜາດ ແລະ ສະພາບການ ຫຼືບໍ່? | • ລະບົບການບໍລິຫານແບບຍືນຍົງ ມີການຈົດບັນທຶກເປັນລາຍລັກອັກສອນຢ່າງລະອຽດ.<br>• ລະບົບການບໍລິຫານແບບຍືນຍົງ ລວມເອົາ ບັນຫາ ສິ່ງແວດລ້ອມ, ສັງຄົມ, ວັດທະນະທຳ, ເສດຖະກິດ, ຄຸນະພາບ, ສິດທິມະນຸດ (ນະໂຍບາຍ ຕໍ່ຕ້ານການຄ້າ, ທາງເພດ ຫຼື ການຂົ່ມເຫັງ ຫຼື ການດ້ອຍຄ່າສິດທິມະນຸດທຸກຮູບແບບ), ສຸຂະພາບ, ຄວາມປອດໄພ (ມີຄວາມພະຍາຍາມໃນການປະຕິບັດຕາມຕົວຢ່າງທີ່ດີ (https://www.mlit.go.jp/river/bousai/olympic/en/tourism01/index.html).<br>• ລະບົບການບໍລິຫານແບບຍືນຍົງ ທີ່ພິຈາລະນາ ການບໍລິຫານຄວາມສ່ຽງ ແລະ ວິກິດການ.<br>• ມີການບັນທຶກການປະຕິບັດລະບົບການບໍລິຫານແບບຍືນຍົງ<br>• ລະບົບການບໍລິຫານແບບຍືນຍົງ ລວມມີຂັ້ນຕອນການຕິດຕາມກວດກາ ການປັບປຸງແບບຕໍ່ເນື່ອງ |
| 1.1-2 | ທ່ານຮູ້ຫຼືບໍ່ວ່າສະຖານທີ່ພັກແຮມຂອງທ່ານໄດ້ສ້າງຜົນກະທົບຫຍັງແດ່ໃຫ້ແກ່ ທຳມະຊາດ ແລະ ວັດທະນະທຳ, ແລະ ທ່ານໄດ້ມີຄວາມພະຍາຍາມທີ່ຈະຫຼຸດຜ່ອນຜົນກະທົບເຫຼົ່ານັ້ນ ໂດຍການວາງແຜນແບບໃດແດ່? | • ມີການຈັດປະເພດຂອງຜົນກະທົບ, ມີການວາງແຜນການຫຼຸດຜ່ອນຜົນກະທົບ ແລະ ມີການຈັດຕັ້ງປະຕິບັດເພື່ອຫຼຸດຜ່ອນຜົນກະທົບ<br>• ຮັບປະກັນວ່າຈຸດໝາຍປາຍທາງທີ່ໄປຢ້ຽມຢາມ ມີພື້ນຖານໂຄງລ່າງທີ່ຈຳເປັນ ທີ່ສາມາດຮັບຮອງການໄຫຼເຂົ້າມາຂອງນັກທ່ອງທ່ຽວຈຳນວນຫຼາຍ<br>• ໄດ້ຮັບການຍິນຍອມເຫັນດີຈາກຊຸມຊົນ/ຊາວພື້ນເມືອງ ແລະ ສົ່ງເສີມການປະຕິບັດທີ່ດີຂອງນັກທ່ອງທ່ຽວ ເມື່ອໄປຢ້ຽມຢາມສະຖານທີ່ ທີ່ມີຄວາມລະອຽດອ່ອນທາງດ້ານວັດທະນະທຳ ຫຼື ປະຫວັດສາດ |

| | | |
|---|---|---|
| 1.1-3 | ທ່ານມີຜູ້ຮັບຜິດຊອບວຽກງານບໍລິຫານດ້ານສິ່ງແວດລ້ອມທີ່ຊັດເຈນ ຫຼືບໍ່? | ມີການມອບໝາຍໃຫ້ບຸກຄົນໃດໜຶ່ງຮັບຜິດຊອບວຽກງານດ້ານສິ່ງແວດລ້ອມ ພ້ອມກັບໜ້າທີ່ ແລະ ຄວາມຮັບຜິດຊອບທີ່ຊັດເຈນ. |
| 1.1-4 | ທ່ານໄດ້ມີການເກັບຮັກສາເອກະສານກ່ຽວກັບກົດໝາຍ ແລະ ນະໂຍບາຍດ້ານສິ່ງແວດລ້ອມ ທີ່ເໝາະສົມກັບສະຖານທີ່ພັກແຮມຂອງທ່ານໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບສາກົນ ຫຼືບໍ່? | ມີການກວດສອບເປັນປະຈຳວ່າເອກະສານເຫຼົ່ານັ້ນ ແມ່ນສະບັບປັບປຸງໃໝ່ ຫຼື ລ່າສຸດ. |
| 1.1-5 ທາງເລືອກ | ທ່ານໄດ້ມີການກວດສອບຄືນ ແລະ ຢືນຢັນ ນະໂຍບາຍຄວາມຍືນຍົງຂອງສະຖານທີ່ພັກແຮມຂອງທ່ານ ປີລະຄັ້ງ ເພື່ອເຮັດໃນການປະຕິບັດງານໃນອະນາຄົດມີປະສິດທິພາບຫຼາຍກວ່າເກົ່າ ຫຼືບໍ່? | ກວດສອບ ແລະ ຢືນຢັນນະໂຍບາຍຄວາມຍືນຍົງ. ຖ້າມີ, ມີການອັບເດດ, ແລະ ບັນທຶກວັນທີ ແລະ ເວລາ ການປະຕິບັດງານ |
| 1.1-6 | ທ່ານໄດ້ມີການຕິດປະກາດຕໍ່ສາທາລະນະກ່ຽວກັບນະໂຍບາຍຄວາມຍືນຍົງຂອງສະຖານທີ່ພັກແຮມຂອງທ່ານ ຫຼືບໍ່? | ຕິດປະກາດ ນະໂຍບາຍຄວາມຍືນຍົງຂອງສະຖານທີ່ພັກແຮມ ເຊັ່ນ: ພາຍໃນພະແນກຕ້ອນຮັບ ແລະ ຫ້ອງພັກແຂກ |
| 1.1-7 | ທ່ານໄດ້ມີການຈັດຝຶກອົບຮົມໃຫ້ແກ່ພະນັກງານກ່ຽວກັບບັນຫາດ້ານຄວາມຍືນຍົງຢ່າງໜ້ອຍປີລະຄັ້ງ ເພື່ອໃຫ້ແນ່ໃຈວ່າສະຖານທີ່ພັກແຮມຂອງທ່ານ ສາມາດປະຕິບັດຕາມຂໍ້ຮຽກຮ້ອງຢ່າງເຕັມເມັດເຕັມໜ່ວຍ ຫຼືບໍ່? | ມີການບັນທຶກວັນທີ, ເວລາ ແລະ ລາຍຊື່ຜູ້ເຂົ້າຮ່ວມຝຶກອົບຮົມ, ໂດຍສະເພາະການຝຶກກ່ຽວກັບຫົວຂໍ້ດ້ານຄວາມຍືນຍົງ. |
| 1.1-8 | ທ່ານໄດ້ປະຕິບັດຕາມຫຼັກການສິດທິມະນຸດ, ມີການສະໜອງສະຖານທີ່ເຮັດວຽກ ທີ່ປອດໄພ ແລະ ຈ່າຍຄ່າແຮງງານພະນັກງານດ້ວຍຄ່າແຮງຂັ້ນຕ່ຳ ພ້ອມກັບສະໜອງປະກັນສຸຂະພາບ ແລະ ປະກັນສັງຄົມ ຫຼືບໍ່? | ມີການບັນທຶກ ແລະ ເກັບຮັກສາກົດໝາຍແຮງງານ ແລະ ຄ່າແຮງຂັ້ນຕ່ຳ ສະບັບລ່າສຸດ. ມີການສອບຖາມພະນັກງານກ່ຽວກັບສະພາບແວດລ້ອມການເຮັດວຽກວ່າປອດໄພດີ ຫຼື ມີສິ່ງໃດຈະຕ້ອງມີການປັບປຸງເພີ່ມເຕີມ. |
| 1.1-9 | ທ່ານໄດ້ມີການເກັບຮັກສາເອກະສານລ່າສຸດກ່ຽວກັບ ສຸຂະອານະໄມ, ຄວາມປອດໄພ, ສິດທິມະນຸດ, ການບໍລິຫານຄວາມສ່ຽງ ແລະ ວິກິດການ, ແລະ ກົດໝາຍແຮງ | • ມີການເກັບຮັກສາເອກະສານສະບັບລ່າສຸດ<br>• ປະຕິບັດທຸກມາດຕະການບັງຄັບ ຕາມກົດໝາຍກ່ຽວກັບການແຜ່ເຊື້ອໄວຣັສ (Virus-Aware Seal ສາມາດກວດສອບແຍກຕ່າງຫາກ) |

| | | |
|---|---|---|
| | ງານ ແລະ ນະໂຍບາຍ ທີ່ນຳໃຊ້ໃນ ສະຖານທີ່ພັກແຮມຂອງທ່ານ ລວມເອົາ ການປ້ອງກັນຄວາມເຄັ່ງຕຶງທາງຮ່າງກາຍ ແລະ ຈິດໃຈຂອງພະນັກງານ ເຊັ່ນ ການ ຄຸ້ມຄອງຂໍ້ຮຽກຮ້ອງຕ່າງໆ ຫຼືບໍ່? | • ພະນັກງານ ໄດ້ພັກຜ່ອນຕາມປົກກະຕິ ແລະ ບໍ່ເຮັດວຽກ ຫລາຍຊົ່ວໂມງເກີນມາດມະຖານ |
| 1.1-10 | ທ່ານໄດ້ມີການສະໜອງການຝຶກອົບຮົມ, ຄຳແນະນຳ, ປະສົບການ ແລະ ໂອກາດ ການກ້າວໜ້າໃນຕຳແໜ່ງ ກ່ຽວກັບ ໜ້າທີ່ ແລະ ຄວາມຮັບຜິດຊອບຂອງພະນັກງານ ລວມເຖິງສິດທິມະນຸດ ແລະ ການບໍລິຫານ ຄວາມສ່ຽງ ແລະ ວິກິດການ ຫຼືບໍ່? | • ມີການບັນທຶກປະຫວັດ ການຝຶກອົບຮົມ (ຂັ້ນຕອນສຸກ ເສີນຖືສ້າງຂຶ້ນ ຕົວຢ່າງ ການຊ່ວຍເຫຼືອສະເພາະຫນ້າ, ການຝຶກອົບຮົມຄວາມປອດໄພ ແລະ ທາງອອກສຸກເສີນ)/ ຄຳແນະນຳ/ປະສົບການ/ໂອກາດ |
| 1.1-11 | ພະນັກງານຂອງທ່ານໄດ້ເຂົ້າຮ່ວມການ ພັດທະນາ ແລະ ການປະຕິບັດງານ ຂອງ ລະບົບການບໍລິຫານຄວາມຍືນຍົງ ຫຼື ບໍ່? | ມີການບັນທຶກ ໜ້າວຽກ ແລະ ຄວາມຮັບຜິດຊອບທີ່ໄດ້ມອບໝາຍ ໃຫ້. |
| 1.1-12 | ເຄື່ອງມືການໂຄສະນາ ແລະ ການຕະຫຼາດ ຂອງທ່ານກ່ຽວກັບ ການປະຕິບັດງານ, ສິນຄ້າ ແລະ ການບໍລິການ ແມ່ນມີຄວາມ ເໝາະສົມ ແລະ ໂປ່ງໃສ ຫຼືບໍ່, ລວມເຖິງ ການອ້າງອີງກ່ຽວກັບຄວາມຍືນຍົງ ແມ່ນ ແທກເໝາະກັບຄວາມເປັນຈິງ ຫຼືບໍ່? | ມີການນຳໃຊ້ບຸກຄົນພາຍນອກໃນການກວດສອບ ຄວາມຖືກຕ້ອງ ແລະ ຄວາມໂປ່ງໃສ |
| 1.1-13 | (ມີສ່ວນຮ່ວມກັບຈຸດໝາຍປາຍທາງ) ສະຖານທີ່ພັກແຮມຂອງທ່ານ ມີການ ພົວພັນກັບ ການວາງແຜນ ແລະ ບໍລິຫານ ການທ່ອງທ່ຽວແບບຍືນຍົງ ຂອງຈຸດໝາຍ ປາຍທາງ ເມື່ອມີໂອກາດ ຫຼືບໍ່? | ລາຍຊື່ຂອງອົງການທີ່ກ່ຽວຂ້ອງ ແລະ ລາຍການໜ້າທີ່ຮັບຜິດຊອບ. |

2) ຄວາມພະຍາຍາມໃນແຕ່ລະຕົວຊີ້ວັດ

| | ມາດຕະຖານ | ຕົວຊີ້ວັດ |
|---|---|---|
| 1.2-1 | **ອາຫານ ແລະ ເຄື່ອງດື່ມ**<br>ທ່ານມີການຕິດຕາມກວດກາການຫຼຸດຜ່ອນສິ່ງເສດເຫຼືອຂອງອາຫານໂດຍການວັດແທກປະລິມານ ແລະ ມີແຜນການນຳກັບມາໃຊ້ຄືນໂດຍການວາງເປົ້າໝາຍ ແລະ ແຜນການບໍລິຫານສິ່ງເສດເຫຼືອ ຫຼືບໍ?<br><br>ທ່ານມີການຫຼຸດຜ່ອນສິ່ງເສດເຫຼືອຂອງອາຫານ ຫຼືບໍ? | • ຂຶ້ນກັບປະລິມານ, ມີການຕິດຕາມກວດກາ ສິ່ງເສດເຫຼືອຂອງອາຫານຈາກພະແນກອາຫານ ແລະ ເຄື່ອງດື່ມ ໃນແຕ່ລະວັນ ຫຼື ຢ່າງຕ່ຳແຕ່ລະເດືອນ.<br>• ຮູ້ຈັກເປີເຊັນຂອງປະລິມານການນຳກັບມາໃຊ້ຄືນ ແລະ/ຫຼື ການໝັກເສດອາຫານ<br>• ພັດທະນາ ແລະ ອັບເດດແຜນການບໍລິຫານສິ່ງເສດເຫຼືອເປັນປະຈຳ |
| 1.2-2 | **ສິ່ງເສດເຫຼືອ ນອກເໜືອຈາກ ເສດອາຫານ ແລະ ເຄື່ອງດື່ມ**<br>ທ່ານມີການຕິດຕາມກວດກາ ປະເພດສິ່ງເສດເຫຼືອອື່ນໆ ນອກເໜືອຈາກເສດອາຫານ ແລະ ເຄື່ອງດື່ມ (ເຊັ່ນ: ສິ່ງຫຸ້ມຫໍ່ ແລະ ຂີ້ເຫຍື້ອ) ເພື່ອຫຼຸດຜ່ອນ ແລະ ມີແຜນການນຳກັບມາໃຊ້ຄືນ ໂດຍມີການວາງເປົ້າໝາຍ ແລະ ແຜນການບໍລິຫານສິ່ງເສດເຫຼືອຢ່າງຊັດເຈນ ຫຼືບໍ? | • ສິ່ງຂອງໃນຫ້ອງພັກແຂກ ເຊັ່ນ: ສິ່ງອຳນວຍຄວາມສະດວກ, ກ່ອງຂອງຂວັນ, ຂີ້ເຫຍື້ອ, ຕຸກນ້ຳ ແລະ ກະປ໋ອງນ້ຳ, ຖ່ານໄຟສາຍ, ສະບູ ແລະ ອື່ນໆ ໄດ້ຖືກກວດກາ ແລະ ວັດແທກປະລິມານການນຳໃຊ້<br>• ມີການແຍກປະເພດ ແລະ ນຳກັບມາໃຊ້ຄືນ<br>• ພັດທະນາ ແລະ ອັບເດດແຜນການບໍລິຫານສິ່ງເສດເຫຼືອເປັນປະຈຳ<br>• ຈັດຕັ້ງ ຫຼື ເຂົ້າຮ່ວມຢ່າງຫ້າວຫັນໃນການນຳສິ່ງເສດເຫຼືອມາໃຊ້ຄືນ ທີ່ເໜືອກວ່າການແຍກສິ່ງເສດເຫຼືອແບບພື້ນຖານ |
| 1.2-3 | **ພະລັງງານ ແລະ ນ້ຳ**<br>ມີການກວດສອບການນຳໃຊ້ພະລັງງານ ແລະ ມີການວາງແຜນ ແລະ ວາງເປົ້າໝາຍເພື່ອຫຼຸດຜ່ອນການນຳໃຊ້ພະລັງງານ (ໄຟຟ້າ, ນ້ຳມັນ, ແກສ ແລະ ອື່ນໆ) | • ມີລາຍການເຄື່ອງໃຊ້ໄຟຟ້າຂອງແຕ່ລະຫ້ອງ ແລະ ແຕ່ລະຕຶກ ລວມເຖິງຈຳນວນເຄື່ອງໃຊ້, ການນຳໃຊ້ເປັນກິໂລວັດ, ແລະ ໄລຍະເວລາການໃຊ້ງານ. ປະຕິບັດຄືກັນກັບບັນດາເຄື່ອງໃຊ້ທີ່ນຳໃຊ້ນ້ຳມັນ ແລະ ແກສ<br>• ວາງແຜນການ ແລະ ມີເປົ້າໝາຍການຫຼຸດຜ່ອນຢ່າງຊັດເຈນ |
| 1.2-4 | ທ່ານມີການປະເມີນຄວາມສ່ຽງຂອງນ້ຳ ແລະ ຮູ້ປະລິມານການນຳໃຊ້ ແລະ ມີການກວດກາຄຸນະພາບຂອງນ້ຳ ຫຼືບໍ, ເພື່ອໃຫ້ແນ່ໃຈວ່າແຜນການ ແລະ ເປົ້າໝາຍການຫຼຸດຜ່ອນການນຳໃຊ້ ແລະ ການບັນເທົາການແຜ່ເຊື້ອ | • ໃນເຂດທີ່ນ້ຳມີຄວາມສ່ຽງສູງ, ເປົ້າໝາຍການກວດກາຄຸ້ມຄອງນ້ຳຈະຕ້ອງໄດ້ຖືວາງອອກຢ່າງຊັດເຈນ<br>• ຮູ້ແຫຼ່ງທີ່ມາຂອງນ້ຳ ແລະ ການບໍລິໂພກນ້ຳ ບໍ່ວ່າຈະເປັນນ້ຳປະປາ, ນ້ຳຈາກແມ່ນ້ຳ, ນ້ຳສ້າງ ແລະ ນ້ຳຝົນ. ຮູ້ວ່ານ້ຳດັ່ງກ່າວໄດ້ຮັບການກັ່ນຕອງແລ້ວ ຫຼືຍັງ |

| | | |
|---|---|---|
| | ໄດ້ຖືກວາງອອກ ແລະ ປະຕິບັດຢ່າງເໝາະສົມ. | |
| 1.2-5 | **ການຈັດຊື້ສີຂຽວ ແລະ ສານເຄມີ**<br>ທ່ານມີນະໂຍບາຍການຈັດຊື້ສີຂຽວ ທີ່ແນໃສ່ການເລືອກຊື້ສິນຄ້າ ທີ່ເປັນມິດກັບສິ່ງແວດລ້ອມ, ສິນຄ້າທ້ອງຖິ່ນ, ແລະ ການຄ້າຂາຍທີ່ເປັນທຳ ເມື່ອເປັນໄປໄດ້ ຫຼືບໍ່? ມີການຈັດຊື້ສິນຄ້າທີ່ມີຄຸນະພາບທີ່ເໝາະສົມ ແລະ ມີການຫຼຸດຜ່ອນປະລິມານການຈັດຊື້ ໂດຍການວາງແຜນ ແລະ ມີເປົ້າໝາຍທີ່ຊັດເຈນ ຫຼືບໍ່? | ສ້າງນະໂຍບາຍການຈັດຊື້ສີຂຽວ ພ້ອມກັບເປົ້າໝາຍ ແລະ ແຜນການຢ່າງຊັດເຈນ. ລາຍການແນະນຳແມ່ນຢູ່ໃນ V ແຕ່ສາມາດລວມລາຍການທີ່ສະເພາະໃນເຂດຂອງທ່ານ (ຕຢ. ໄມ້ຄືບຖູ) |
| 1.2-6 | ທ່ານຮູ້ປະລິມານການນຳໃຊ້ສານເຄມີ (ນ້ຳຢາຂ້າແມງໄມ້, ຜະລິດຕະພັນອານະໄມ ແລະ ອື່ນໆ) ແລະ ມີການວາງແຜນ ແລະ ເປົ້າໝາຍຫຼຸດຜ່ອນການນຳໃຊ້ ເພື່ອຫຼຸດຜ່ອນມົນລະພິດທາງສິ່ງແວດລ້ອມ ຫຼືບໍ່? | ສ້າງລາຍການຜະລິດຕະພັນສານເຄມີ ແລະ ຈຸດປະສົງການນຳໃຊ້. ວາງເປົ້າໝາຍ ເພື່ອຫຼຸດຜ່ອນການນຳໃຊ້ ແລະ ຊອກຫາຜະລິດຕະພັນທີ່ບໍ່ເປັນສານເຄມີເພື່ອທົດແທນ. |

3) ເອກະສານຕິດຂັດ ແລະ ການສື່ສານດ້ານຄວາມຍືນຍົງ

| | ມາດຕະຖານ | ຕົວຊີ້ວັດ |
|---|---|---|
| 1.3-1 | **ເອກະສານຕິດຂັດ**<br>ທ່ານມີການສະໜອງຂໍ້ມູນກ່ຽວກັບນະໂຍບາຍຄວາມຍືນຍົງ, ແລະ ການປະຕິບັດງານ ໃຫ້ແກ່ຜູ້ມີສ່ວນຮ່ວມຕ່າງໆ ເຊັ່ນ ລູກຄ້າ ແລະ ຜູ້ຈັດສົ່ງ, ແລະ ຫາຊ່ອງທາງໃຫ້ພວກເຂົາມີສ່ວນຮ່ວມ ຫຼືບໍ່? | ນະໂຍບາຍຄວາມຍືນຍົງລວມທັງແຜນການຫຼຸດຜ່ອນ CO2 ແມ່ນໄດ້ເຜີຍແຜ່ໃຫ້ສາທາລະນະຮັບຮູ້ ແລະ ການປະຕິບັດທີ່ອີງໃສ່ນະໂຍບາຍໄດ້ຖືລະບຸໄວ້ຢ່າງລະອຽດ |
| 1.3-2 | **ລູກຄ້າ**<br>ທ່ານມີລະບົບການຕິດຕາມກວດກາ ແລະ ຮັບຟັງຄຳຕິຊົມຂອງລູກຄ້າ ແລະ ມີການຈັດການທີ່ເໝາະສົມ ຫຼືບໍ່? | ມີການສະແດງລະບົບການຈັດການກ່ຽວກັບບັນຫາຄວາມຍືນຍົງພາຍໃນສະຖານທີ່ພັກແຮມ |

| | | |
|---|---|---|
| 1.3-3 ທາງເລືອກ | ທ່ານໄດ້ສະໜອງການທ່ອງທ່ຽວແບບນິເວດວິທະຍາ ຫຼືບໍ່? | ເຂົ້າໃຈແນວທາງຂອງການທ່ອງທ່ຽວແບບນິເວດວິທະຍາ ແລະ ມີການສະໜອງການທ່ອງທ່ຽວດັ່ງກ່າວແບບໂດຍກົງ ແລະ ທາງອ້ອມ. ມີການຊອກຫາຊ່ອງທາງການທ່ອງທ່ຽວແບບມີຄວາມຮັບຜິດຊອບຕໍ່ຊຸມຊົນ ແລະ ການທ່ອງທ່ຽວທ້ອງຖິ່ນ. |
| 1.3-4 ທາງເລືອກ | ທ່ານມີການສະໜອງການທ່ຽວຊົມ ສະຖານທີ່ພັກແຮມເພື່ອສະແດງໃຫ້ເຫັນລະບົບການບໍລິຫານຄວາມຍືນຍົງ ຫຼືບໍ່? | ສະແດງລະບົບການບໍລິຫານຄວາມຍືນຍົງ ໂດຍການສະໜອງທົວທ່ຽວຊົມສະຖານທີ່ພັກແຮມ |

II. **ອາຫານ ແລະ ເຄື່ອງດື່ມ**

1) ການຫຼຸດຜ່ອນ ແລະ ການນຳກັບມາໃຊ້ຄືນ

| | ມາດຕະຖານ | ຕົວຊີ້ວັດ |
|---|---|---|
| 2.1-1 | ທ່ານມີລະບົບການຈັດຊື້ທີ່ມີປະສິດທິພາບບໍ? | ມີລະບົບການຈັດຊື້ທີ່ມີປະສິດທິພາບ ທີ່ແນໃສ່ການນຳໃຊ້ຜະລິດຕະພັນທ້ອງຖິ່ນ ແລະ ສະແດງໃຫ້ເຫັນເຖິງຄວາມຮັບຜິດຊອບຕໍ່ສັງຄົມ |
| 2.1-2 | ທ່ານມີລະບົບການຈັດການກັບອາຫານເຫຼືອ ຫຼື ເສດອາຫານ ຫຼືບໍ່? | ມີການໝັກເສດອາຫານໃຫ້ກາຍເປັນປຸຍ ຫຼື ນຳໄປເກືອສັດ, ປ່ຽນເສດອາຫານໃຫ້ກາຍເປັນແຫຼ່ງພະລັງງານ |
| 2.1-3 ທາງເລືອກ | ທ່ານມີການຫຼຸດປະລິມານເສດອາຫານໂດຍການຕາກໃຫ້ແຫ້ງ ຫຼືບໍ່? | ຫຼຸດປະລິມານເສດອາຫານໂດຍການຕາກໃຫ້ແຫ້ງ ຫຼື ລະບາຍນ້ຳອອກ |
| 2.1-4 | ທ່ານໄດ້ນຳເອົານ້ຳມັນເຮັດກິນ ມານຳໃຊ້ຊ້ຳ ຫຼື ເອົາກັບມານຳໃຊ້ໃໝ່ ຫຼືບໍ່? | ເມື່ອເປັນໄປໄດ້, ນຳນ້ຳມັນເຮັດກິນໄປເປັນເຊື້ອເພີງ ແລະ/ຫຼື ສະບູ |
| 2.1-5 | ທ່ານມີລະບົບການຫຼຸດຜ່ອນການນຳໃຊ້ວັດສະດຸທີ່ໃຊ້ເທື່ອດຽວແລ້ວຖິ້ມ ຫຼືບໍ່? | ມີນະໂຍບາຍເພື່ອຫຼຸດຜ່ອນການນຳໃຊ້: ຫຼອດ, ບ່ວງຢາງ, ໄມ້ຄີບທີ່ ແລະ ກ່ອງອາຫານປາສຕິກ ຫຼືບໍ່? ຫຼີກລ້ຽງການນຳໃຊ້ປາສຕິກທີ່ໃຊ້ເທື່ອດຽວແລ້ວຖິ້ມ. ສົ່ງເສີມການດື່ມນ້ຳຈາກທໍ່ທີ່ປອດໄພ ແລະ ສະອາດ, ສະໜອງແກ້ວນ້ຳແບບເຕີມທີ່ສາມາດນຳມາໃຊ້ຄືນໄດ້ ແລະ ບໍ່ສະໜອງນ້ຳເປັນຕຸກປາສຕິກ |

2) ການຈັດຊື້ອາຫານ

| | ມາດຕະຖານ | ຕົວຊີ້ວັດ |
|---|---|---|
| 2.2-1 | ທ່ານໄດ້ພະຍາຍາມເລືອກຊື້ວັດຖຸດິບທຳມະຊາດ ແລະ ປອດສານພິດ ຫຼືບໍ່? | ມີລາຍຊື່ຂອງຜູ້ສະໜອງສິນຄ້າ ແລະ ມີການກວດສອບກັບພວກເຂົາເປັນປະຈຳເພື່ອໃຫ້ແນ່ໃຈວ່າວັດຖຸດິບທີ່ໄດ້ຮັບມານັ້ນກົງຕາມວັດຖຸປະສົງຂອງທ່ານ. |
| 2.2-2 | ທ່ານໄດ້ມີການລິເລີ່ມເພື່ອຫຼຸດຜ່ອນການສະໜອງ/ການຊື້ຊີ້ນ ແລະ ບໍ່ມີການສະໜອງວັດຖຸດິບຈາກປາ, ອາຫານທະເລ ຫຼື ຊະນິດພັນອື່ນໆ ທີ່ໃກ້ສູນພັນ | • ບໍ່ມີວັດຖຸດິບ ຈາກຊະນິດພັນທີ່ໃກ້ສູນພັນ (ຕຍ. ປາ, ປູ, ນົກ, ອື່ນໆ) ຫຼື ຊະນິດພັນອື່ນໆ (ຜິດ)<br>• ນຳໃຊ້ລາຍການ ຂອງຊະນິດພັນທີ່ໃກ້ສູນພັນຈາກ IUCN ເປັນຂໍ້ມູນອ້າງອີງ |

## III. **ການບໍລິຫານສິ່ງເສດເຫຼືອ ແລະ ການນຳກັບມາໃຊ້ໃໝ່**

1) ການບໍລິການພາຍໃນຫ້ອງພັກ

| | ມາດຕະຖານ | ຕົວຊີ້ວັດ |
|---|---|---|
| 3.1-1 | ທ່ານມີການຫຼຸດຜ່ອນການສະໜອງສິ່ງອຳນວຍຄວາມສະດວກໃນຫ້ອງພັກທີ່ໃຊ້ຄັ້ງດຽວແລ້ວຖິ້ມ ຫຼືບໍ່? | ສ້າງລາຍການສິ່ງອຳນວຍຄວາມສະດວກໃນຫ້ອງພັກ ເຊັ່ນ: ແປງຖູແຂ້ວ, ສະບູ ແລະ ຫວີ |
| 3.1-2 | ທ່ານມີການຫຼຸດຜ່ອນການຫຸ້ມຫໍ່ຜະລິດຕະພັນຕ່າງໆ ຫຼືບໍ່? | ບໍ່ຫຸ້ມຫໍ່ຜະລິດຕະພັນສອງຊັ້ນ ຫຼື ບໍ່ຫຸ້ມຫໍ່ເຄື່ອງໃຊ້ທີ່ບໍ່ຈຳເປັນຕ້ອງຫຸ້ມຫໍ່ |
| 3.1-3 | ທ່ານມີການສົ່ງເສີມໃຫ້ແຂກນຳໃຊ້ເຄື່ອງໃຊ້ຫ້ອງນ້ຳຂອງເຂົາເຈົ້າເອງ ຫຼືບໍ່? | ແປງຖູແຂ້ວ, ແນວໂກນໜວດ ແລະ ອື່ນໆ |
| 3.1-4 | ທ່ານໄດ້ນຳໃຊ້ເຄື່ອງຈ່າຍ ຫຼື ແກ້ວແບບເຕີມ ແລະ ຫຼີກລ້ຽງການນຳໃຊ້ກ່ອງ ຫຼື ຂວດທີ່ໃຊ້ເທື່ອດຽວແລ້ວຖິ້ມ ຫຼືບໍ່? | ເຄື່ອງຈ່າຍຢາສະຫົວ, ສະບູແຫລວ ແລະ ອື່ນໆ |
| 3.1-5 | ທ່ານໄດ້ມີການແຈ້ງແຂກກ່ຽວກັບທາງເລືອກກ່ຽວກັບ ການບໍ່ປ່ຽນຜ້າປູຕຽງ ແລະ ຜ້າເຊັດໂຕ ທຸກໆມື້ ເພື່ອຊ່ວຍຮັກສາສິ່ງແວດລ້ອມ ຫຼືບໍ່? | ເມື່ອເປັນໄປໄດ້, ມີການຊຸກຍູ້ ແລະ ແຈ້ງໃຫ້ແຂກຮັບຮູ້ກ່ຽວກັບການປ່ຽນຜ້າປູຕຽງ ແລະ ຜ້າເຊັດໂຕ ເພື່ອຊ່ວຍຮັກສາສິ່ງແວດລ້ອມ ບໍ່ວ່າຈະເປັນຕອນເຊັກອິນ ຫຼື ຕອນແຂກເຮັດການຈອງຫ້ອງ ດ້ວຍການຂຽນແຈ້ງ ຫຼື ບອກປາກເປົ່າ |

| | | |
|---|---|---|
| 3.1-6 | ທ່ານມີການແຍກປະເພດຂີ້ເຫຍື້ອ ແລະ ການນຳກັບມາໃຊ້ໃໝ່ ຫຼືບໍ່? | ຝຶກພະນັກງານແມ່ບ້ານໃນການແຍກປະເພດຂີ້ເຫຍື້ອ ຫຼື ສະໜອງຖັງຂີ້ເຫຍື້ອຫຼາຍປະເພດໃນຫ້ອງພັກ. ເຮັດການນຳກັບມາໃຊ້ໃໝ່ໃຫ້ຫຼາຍທີ່ສຸດ |
| 3.1-7 | ທ່ານມີການຟື້ນຟູ ແລະ ປັບປຸງ ເຟີນິເຈີ ໃນຫ້ອງພັກແຂກເພື່ອການນຳໃຊ້ງານໃນໄລຍະຍາວ ຫຼືບໍ່? | ມີການບັນທຶກຮູບພາບ ແລະ ເກັບກຳລາຍລະອຽດ. |

2) ບໍລິເວນຫ້ອງການ, ພື້ນທີ່ສ່ວນລວມ, ສາງເກັບເຄື່ອງ

| | ມາດຕະຖານ | ຕົວຊີ້ວັດ |
|---|---|---|
| 3.2-1 | ທ່ານໄດ້ແຍກປະເພດເຈ້ຍ ແລະ ມີການນຳກັບມາໃຊ້ໃໝ່ ຫຼືບໍ່? | ເຈ້ຍຖ່າຍເອກະສານ, ໜັງສືພິມ, ປຶ້ມວາລະສານ, ກ່ອງເຈ້ຍ |
| 3.2-2 | ທ່ານມີການແຍກປະເພດວັດສະດຸທີ່ນຳກັບມາໃຊ້ໃໝ່ ຫຼືບໍ່? | ມີການແຍກ ປາສຕິກ, ກະປ໋ອງເຄື່ອງດື່ມ, ແກ້ວນໍ້າ, ແລະ ບັນດາກ່ອງຕ່າງໆ ເປັນປະເພດໃຜລາວ, ແລະ ມີການນຳກັບມາໃຊ້ໃໝ່ເມື່ອເຫັນສົມຄວນ. |
| 3.2-3 | ເມື່ອມີການພິມ ຫຼື ຖ່າຍເອກະສານ, ທ່ານໄດ້ນຳໃຊ້ເຈ້ຍທັງສອງໜ້າ ຫຼືບໍ່? | ພິມ ຫຼື ຖ່າຍເອກະສານ, ໂດຍນຳໃຊ້ເຈ້ຍທັງສອງໜ້າ. ເຊັ່ນດຽວກັນກັບໂທລະສານ |
| 3.2-4 | ທ່ານໄດ້ມີການຫຼຸດຜ່ອນການຫຸ້ມຫໍ່ວັດສະດຸ ຫຼື ຂອງຂວັນຕ່າງໆ ຫຼືບໍ່? | ຊຸກຍູ້ໃຫ້ແຂກຖືຖົງມາເອງ ຫຼື ບໍ່ດັ່ງນັ້ນກໍ່ສະໜອງຖົງຜ້າ ຫຼື ຖົງເຈ້ຍທີ່ຜະລິດໂດຍຊຸມຊົນໃນທ້ອງຖິ່ນ. |
| 3.2-5 | ນອກຈາກວ່າໄດ້ຮັບອານຸຍາດ, ທ່ານໄດ້ຫຼີກລ້ຽງການຄ້າຂາຍສິນຄ້າ ຫຼື ສະແດງວັດຖຸບູຮານ ຫຼືບໍ່? | ກວດເບິ່ງວ່າວັດຖຸບູຮານຕ່າງໆທີ່ວາງສະແດງໃນສະຖານທີ່ພັກແຮມແມ່ນຖືກກົດໝາຍການຄຸ້ມຄອງ. |

3) ຂອບເຂດໂດຍລວມ

| | ມາດຕະຖານ | ຕົວຊີ້ວັດ |
|---|---|---|
| 3.3 | ທ່ານມີແຜນການບໍລິຫານສິ່ງເສດເຫຼືອ ແລະ ແຜນຈັດຕັ້ງປະຕິບັດ ຫຼືບໍ່? | ມີການແຍກ ແລະ ກຳຈັດຫຼອດໄຟຕ່າງໆ, ແລະ ຖ່ານໄຟສາຍຢ່າງເໝາະສົມ. ມີການສະສາງບັນດາເຄື່ອງໃຊ້ໄຟຟ້າຢ່າງຖືກຕ້ອງ ແລະ ເໝາະສົມ |

| | | |
|---|---|---|
| 3.4 | ການສະໜອງລະບົບສຂະພິບານພື້ນຖານຂອງທ່ານ ໄດ້ສ້າງມົນລະພິດ ຫຼືບໍ? | ລະບົບການບໍລິຫານສິ່ງເສດເຫຼືອ ບໍ່ສ້າງຜົນກະທົບຕໍ່ກັບສິ່ງແວດລ້ອມ ແລະ ຊຸມຊົນອ້ອມຂ້າງ. |

IV. **ພະລັງງານ ແລະ ນ້ຳ**

1) ພະລັງງານຄວາມຮ້ອນ

| | ມາດຕະຖານ | ຕົວຊີ້ວັດ |
|---|---|---|
| 4.1-1 | ທ່ານໄດ້ນຳໃຊ້ພະລັງງານທຳມະຊາດເຊັ່ນ ພະລັງງານແສງອາທິດ, ລົມ, ນ້ຳ ແລະ ພະລັງງານທໍລະນີສາດ ເພື່ອຜະລິດນ້ຳຮ້ອນ ແລະ ພະລັງງານໄຟຟ້າ ພາຍໃນສະຖານທີ່ພັກແຮມຂອງທ່ານ ຫຼືບໍ? | ມີລາຍການບົ່ງບອກ ວິທີການຜະລິດພະລັງງານແບບອື່ນໆ ນອກຈາກການນຳໃຊ້ໄຟຟ້າຕາຂ່າຍ ແລະ ນ້ຳມັນ |
| 4.1-2 | ທ່ານໄດ້ມີການລະບຸ ປະເພດ ແລະ ທີ່ມາຂອງພະລັງງານຕ່າງໆ ພ້ອມກັບຂັ້ນຕອນໃນການຫຼຸດຜ່ອນການນຳໃຊ້ ຫຼືບໍ? | ຊີ້ບອກເປີເຊັນການນຳໃຊ້ຂອງແຕ່ລະພະລັງງານທຳມະຊາດ/ທາງເລືອກ ເປັນແຕ່ລະປະເພດ. ບົ່ງບອກຂັ້ນຕອນໃນການຫຼຸດຜ່ອນການນຳໃຊ້ພະລັງງານຢ່າງລະອຽດ. |
| 4-1-3 ທາງເລືອກ | ທ່ານໄດ້ມີການວາງມາດຕະການປ້ອງກັນເພື່ອຫຼຸດຜ່ອນຜົນກະທົບຈາກການສະໜອງພະລັງງານພື້ນຖານ ທີ່ອາດຈະເກີດຂຶ້ນກັບຊຸມຊົນອ້ອມຂ້າງ ຫຼືບໍ? | ມີການສົມທຽບການນຳໃຊ້ໂດຍສະເລ່ຍກັບເພື່ອນບ້ານ ຫຼື ນຳໃຊ້ຂໍ້ມູນຈາກສູນກາງ. |

2) ເຄື່ອງເຮັດຄວາມຮ້ອນ, ເຄື່ອງລະບາຍອາກາດ ແລະ ເຄື່ອງປັບອາກາດ (HVACs)

| | ມາດຕະຖານ | ຕົວຊີ້ວັດ |
|---|---|---|
| **ພາຍໃນສະຖານທີ່ພັກແຮມໂດຍລວມ** | | |
| 4-2-1 | ທ່ານໄດ້ມີການປັບປຸງແຜງກັນຄວາມຮ້ອນພາຍໃນອາຄານ ຫຼືບໍ? | ຕິດຕັ້ງປະຕູສອງຊັ້ນ, ກະຈົກສອງຊັ້ນ, ຜ້າກັ້ງທີ່ກັນຄວາມຮ້ອນ, ປຸກຕົ້ນໄມ້ຕາມຝາເພື່ອຫຼຸດອຸນນະພູມ |
| 4-2-2 | ທ່ານມີການຕັ້ງອຸນນະພູມ ພາຍໃນຫ້ອງການ, ພາກສ່ວນຫຼັງບ້ານ ໂດຍການນຳໃຊ້ ເຄື່ອງຄວບຄຸມຄວາມຮ້ອນ, ເຄື່ອງລະບາຍອາກາດ ແລະ ເຄື່ອງປັບອາກາດ ຕາມຄຳແນະນຳຈາກພາກສ່ວນທີ່ກ່ຽວຂ້ອງ ຫຼືບໍ? | ເຊັ່ນ: ອາຄານໃນປະເທດຍີ່ປຸ່ນ ແມ່ນຕັ້ງອຸນນະພູມຢູ່ 28 ອົງສາ, 24 ອົງສາ ສຳລັບ ປະເທດມາເລເຊຍ ແລະ ອິນໂດເນເຊຍ, 25 ອົງສາ ສຳລັບປະເທດລາວ ແລະ ໄທ. |

| ຫ້ອງພັກແຂກ | | |
|---|---|---|
| 4-2-3 ທາງເລືອກ | ແຂກສາມາດປັບອຸນນະພູມໃນຫ້ອງພັກດ້ວຍຕົວເອງ ຫຼືບໍ່? | ຕິດຕັ້ງເຄື່ອງວັດອຸນນະພູມໃນຫ້ອງພັກແຂກ |

3) ແສງໄຟ

| | ມາດຕະຖານ | ຕົວຊີ້ວັດ |
|---|---|---|
| 4.3-1 | ທ່ານໄດ້ນຳໃຊ້ຫຼອດໄຟແບບປະຫຍັດໄຟ ຫຼື LEDs ແທນການນຳໃຊ້ຫຼອດໄຟລຸ້ນເກົ່າ ຫຼືບໍ່? | • ຕິດຕັ້ງຫຼອດໄຟແບບປະຫຍັດ ຫຼື LEDs ຫຼາຍກວ່າ 20% ຂອງຫຼອດໄຟທີ່ນຳໃຊ້ທັງໝົດໃນສະຖານທີ່ພັກແຮມ (ມີສ່ວນຮ່ວມ)<br>• ຕິດຕັ້ງຫຼອດໄຟແບບປະຫຍັດ ຫຼື LEDs ຫຼາຍກວ່າ 80% ຂອງຫຼອດໄຟທີ່ນຳໃຊ້ທັງໝົດໃນສະຖານທີ່ພັກແຮມ (ຜ່ານມາດຕະຖານ) |
| 4.3-2 ທາງເລືອກ | ທ່ານມີອຸປະກອນຄວບຄຸມເພື່ອຫຼຸດຜ່ອນການນຳໃຊ້ໄຟຟ້າພາຍໃນຫ້ອງພັກທີ່ບໍ່ໄດ້ໃຊ້ງານ ຫຼືບໍ່? | ມີອຸປະກອນເພື່ອປິດການໃຊ້ງານໄຟຟ້າພາຍໃນຫ້ອງພັກ ຫຼື ຄວບຄຸມໂດຍພະນັກງານ |
| 4.3-3 | ທ່ານມີເຄື່ອງຈັບການເຄື່ອນໄຫວ (sensor) ຫຼື ເຄື່ອງຕັ້ງເວລາການປິດ-ເປີດໄຟ ໃນເຂດສ່ວນລວມ ຫຼືບໍ່? | ມີລາຍການລະອຽດ ກ່ຽວກັບຈຳນວນ ແລະ ເຂດທີ່ມີການຕິດຕັ້ງອຸປະກອນດັ່ງກ່າວ |

4) ວິທີການອື່ນໆໃນການປະຫຍັດພະລັງງານ

| | ມາດຕະຖານ | ຕົວຊີ້ວັດ |
|---|---|---|
| 4.4-1 | ທ່ານໄດ້ມີການບຳລຸງຮັກສາອຸປະກອນເຄື່ອງໃຊ້ຕ່າງໆເພື່ອເປັນການປະຫຍັດພະລັງງານ ຫຼືບໍ່? | ມີການບັນທຶກ ວັນ ແລະ ເວລາການບຳລຸງຮັກສາ |
| 4.4-2 ທາງເລືອກ | ທ່ານໄດ້ໃຫ້ຄວາມສະດວກໃນການເຮັດທລະກຳສະກຸນເງິນດິຈິຕອສ ບໍ? ເນື່ອງຈາກການນຳໃຊ້ພະລັງງານສູງ | ມີນະໂຍບາຍ ຫຼື ຄຳແນະນຳທີ່ຕ້ານການເຮັດທຸລະກຳກ່ຽວກັບສະກຸນເງິນດິຈິຕອສ ເນື່ອງຈາກຄວາມກັງວົນກ່ຽວກັບການໃຊ້ພະລັງງານທີ່ຫລວງຫລາຍ |

5) ການຫຼຸດຜ່ອນອາຍກາກໂບນິກ ($CO_2$)

| | ມາດຕະຖານ | ຕົວຊີ້ວັດ |
|---|---|---|
| 4.5-1 | ທ່ານໄດ້ມີການວັດແທກ, ຄິດໄລ່ ແລະ ຫຼຸດຜ່ອນການປ່ອຍອາຍພິດເຮືອນກະຈົກ (greenhouse gas emission) ຈາກສະຖານທີ່ພັກແຮມຂອງທ່ານ ທີ່ເກີດຈາກການນໍາໃຊ້ພະລັງງານຕ່າງໆ ໂດຍການສົມທຽບປີຕໍ່ປີ ຫຼືບໍ່? | ສ້າງລາຍການແຫຼ່ງທີ່ມາຂອງການປ່ອຍອາຍພິດເຮືອນກະຈົກ ແລະ ວັດແທກປະລິມານ ຖ້າເປັນໄປໄດ້ ເຊັ່ນ: ເຄື່ອງໃຊ້ໄຟຟ້າ, ກາສ, ນໍ້າມັນ, ສິ່ງເສດເຫຼືອ ແລະ ສົມທຽບກັບປີທີ່ຜ່ານມາ ເພື່ອສືບຕໍ່ຫຼຸດຜ່ອນການປ່ອຍອາຍພິດ. ຖ້າເປັນໄປໄດ້, ໃຫ້ຄິດໄລ່ປະລິມານຂອງການປ່ອຍອາຍພິດເຮືອນກະຈົກ ເຊັ່ນ ອາຍກາກໂບນິກ ຕໍ່ແຂກຕໍ່ເດືອນ ຫຼື ປີ. |
| 4.5-2 | ທ່ານໄດ້ປະຕິບັດຂັ້ນຕອນ ຫຼື ມີແຜນການທີ່ຈະຫຼຸດຜ່ອນ ແລະ ຊົດເຊີຍການປ່ອຍອາຍພິດເຮືອນກະຈົກຢ່າງເຕັມເມັດເຕັມໜ່ວຍ ເພື່ອໃຫ້ປະລິມານກາສກາກໂບນິກເປັນສູນ (Net Zero) ຫຼືບໍ່? | • ມີລາຍການຂັ້ນຕອນ ແລະ ການປະຕິບັດງານ<br>• ມີໃບຢັ້ງຢືນ Net Zero ຈາກອົງກອນສິດສະລະ ຫຼື ບົດລາຍງານຮັບປະກັນ |
| 4.5-3 | ທ່ານໄດ້ມີການຫຼຸດຜ່ອນການນໍາໃຊ້ຍານພາຫະນະ ແລະ ມີການສົ່ງເສີມໃຫ້ພະນັກງານ, ແຂກ ແລະ ຜູ້ຈັດສົ່ງ ໃຫ້ນໍາໃຊ້ທາງເລືອກອື່ນທີ່ຊ່ວຍຫຼຸດຜ່ອນການປ່ອຍອາຍພິດຈາກຍານພາຫະນະ ຫຼືບໍ່? | ສ້າງລາຍການຍານພາຫະນະທີ່ທາງສະຖານທີ່ພັກແຮມເປັນເຈົ້າຂອງ ແລະ ເຊົ່າມາ ລວມທັງຍານພາຫະນະຂອງພະນັກງານ ແລະ ຜູ້ຈັດສົ່ງສິນຄ້າ ເພື່ອຊ່ວຍຫາວິທີທາງໃນການນໍາໃຊ້ຍານພາຫະນະທີ່ບໍ່ສ້າງມົນລະພິດ |
| 4.5-4 | ມາດຕະການທີ່ສ້າງຂຶ້ນໄດ້ຖືກປະຕິບັດ ຫຼືບໍ່ ເພື່ອຕ້ານກັບການຜົນກະທົບສຸກເສີນຈາກສະພາບອາກາດທີ່ຄາດຄະເນໄວ້ ແລະ ເພື່ອເສີມຂະຫຍາຍຄວາມທົນທານຕໍ່ກັບສະພາບອາກາດ ແລະ ການປັບຕົວ, ໃນທາງທີ່ເປັນມິດກັບສັງຄົມ ແລະ ສິ່ງແວດລ້ອມ | ໄດ້ມີຄວາມພະຍາຍາມໃນການປະຕິບັດຕາມ ຖະແຫຼງການ AEN Xiling Snow Mountain ກ່ຽວກັບ ການປັບຕົວຕໍ່ກັບສະພາບອາກາດ ແລະ ການກໍານົດລະດູການການທ່ອງທ່ຽວແບບນິເວດ |
| 4.5-5 ທາງເລືອກ | ສະຖານທີ່ພັກຂອງທ່ານນໍາໃຊ້ແຕ່ລົດໄຟຟ້າ, ແລະ ນໍາໃຊ້ພະລັງງານທົດແທນ 100 ເປີເຊັນບໍ? | |

6) ການປະຫຍັດນ້ຳ

| | ມາດຕະຖານ | ຕົວຊີ້ວັດ |
|---|---|---|
| 4.6-1 | ທ່ານມີເຄື່ອງປັບແຮງດັນນ້ຳ, ຫົວຝັກບົວແບບປະຫຍັດນ້ຳ, ກ໋ອກນ້ຳແບບເຊັນເຊີ ແລະ ອື່ນໆ ທີ່ຊ່ວຍໃນການປະຫຍັດນ້ຳ ຫຼືບໍ? | ສ້າງລາຍການກ໋ອກນ້ຳທັງໝົດພາຍໃນອາຄານລວມເອົາກ໋ອກນ້ຳລ້າງມື, ຝັກບົວອາບນ້ຳ ແລະ ສ້ວມ ໂດຍມີການວັດແທກປະລິມານນ້ຳທີ່ຖືກນຳໃຊ້ຕໍ່ນາທີ ຫຼື ຕໍ່ຄັ້ງ ເພື່ອກວດສອບການນຳໃຊ້ |
| 4.6-2 | ທ່ານໄດ້ມີການນຳນ້ຳກັບມາໃຊ້ຊ້ຳອີກບໍ? | ຄາດຄະເນປະລິມານຂອງນ້ຳທີ່ຖືກນຳກັບມາໃຊ້ຊ້ຳ |
| 4.6-3 | ທ່ານໄດ້ມີການຈັດເກັບ ແລະ ນຳໃຊ້ນ້ຳຝົນ ຫຼືບໍ? | ຄາດຄະເນປະລິມານນ້ຳຝົນທີ່ຖືກຈັດເກັບ |
| 4.6-4 | ທ່ານໄດ້ມີການວັດແທກການນຳໃຊ້ນ້ຳຈາກແຫຼ່ງຕ່າງໆ ຫຼືບໍ? | ສ້າງລາຍການ ແລະ ວັດແທກການນຳໃຊ້ນ້ຳຈາກແຫຼ່ງຕ່າງໆໃນແຕ່ລະເດືອນ |
| 4.6-5 | ທ່ານໄດ້ມີການບົ່ງຊີ້ທຸກໆແຫຼ່ງທີ່ມາຂອງນ້ຳ ຫຼືບໍ? | ມີການບົ່ງຊີ້ທຸກໆແຫຼ່ງທີ່ມາຂອງນ້ຳ ທີ່ນຳມາໃຊ້ |
| 4.6-6 | ທ່ານຮັບປະກັນວ່າ ທ່ານບໍ່ໄດ້ມີການສ້າງຄວາມອັນຕະລາຍ ຫຼື ຄວາມເສຍຫາຍຕໍ່ກັບ ການສະໜອງນ້ຳພື້ນຖານຂອງຊຸມຊົນອ້ອມຂ້າງ ຫຼືບໍ? | ການນຳໃຊ້ນ້ຳຂອງສະຖານທີ່ພັກແຮມຂອງທ່ານບໍ່ໄດ້ສ້າງຜົນກະທົບໃຫ້ແກ່ຊຸມຊົນອ້ອມຂ້າງ |

## V. ການຈັດຊື້ສີຂຽວ ແລະ ການນຳໃຊ້ສານເຄມີ

1) ການຈັດຊື້ສີຂຽວ

| | ມາດຕະຖານ | ຕົວຊີ້ວັດ |
|---|---|---|
| **ເຄື່ອງໃຊ້ອຸປະໂພກ** | | |
| 5.1. ທ່ານມີນະໂຍບາຍການຈັດຊື້ສິນຄ້າທີ່ຍືນຍົງ ແລະ ມີການວັດແທກເປີເຊັນການໃຊ້ງານ ຫຼືບໍ? | | 80ເປີເຊັນ ຂອງຜະລິດຕະພັນທີ່ນຳໃຊ້ພາຍໃນສະຖານທີ່ພັກແຮມແມ່ນເປັນມິດຕໍ່ສິ່ງແວດລ້ອມ |
| 5.1-1 | ເຈ້ຍສຳເນົາເອກະສານ | |
| 5.1-2 | ເຈ້ຍອານະໄມ | |
| 5.1-3 | ຊອງຈົດໝາຍ ແລະ ເຈ້ຍຈົດບັນທຶກ | |
| 5.1-4 | ເຄື່ອງໃຊ້ຫ້ອງການ ແລະ ເຄື່ອງໃຊ້ອຸປະໂພກອື່ນໆ | ເຈ້ຍຫ້ອງນ້ຳ, ບິກ, ຊຸດພະນັກງານ ແລະ ອື່ນໆ |
| 5.1-5 | ເອກະສານຕ່າງໆ | |

| | | |
|---|---|---|
| **ເຄື່ອງໃຊ້ໄລຍະຍາວ** | | |
| ທ່ານມີນະໂຍບາຍການຈັດຊື້ ແລະ ກວດສອບວ່າ 50% ຂອງເຄື່ອງໃຊ້ຕໍ່ໄປນີ້ເປັນມິດຕໍ່ກັບສິ່ງແວດລ້ອມ ຫຼືບໍ່? | | ສ້າງນະໂຍບາຍການຈັດຊື້ສິນຄ້າທີ່ຍືນຍົງ ແລະ ມີການວັດແທກເປີເຊັນການໃຊ້ງານ |
| 5.1-6 | ຍານພາຫະນະຂອງບໍລິສັດ | |
| 5.1-7 | ຄອມພິວເຕີ, ຈັກສຳເນົາເອກະສານ, ຈັກພິມເອກະສານ, ແລະ ອຸປະກອນພາຍໃນຫ້ອງການອື່ນໆ | |
| 5.1-8 | ຕູ້ເຢັນພາຍໃນຫ້ອງພັກແຂກ | |
| 5.1-9 | ເຄື່ອງເຮັດຄວາມຮ້ອນ, ເຄື່ອງລະບາຍອາກາດ ແລະ ເຄື່ອງປັບອາກາດ (HVACs) | |
| 5.1-10 | ໂທລະທັດ, ເຄື່ອງເຮັດກາເຟ, ໝໍ້ຕົ້ມນໍ້າຮ້ອນພາຍໃນຫ້ອງພັກແຂກ | |
| **ຄູ່ຮ່ວມທຸລະກິດ** | | |
| 5.1-11 | ທ່ານໄດ້ມີການຊຸກຍູ້ໃຫ້ຄູ່ຮ່ວມທຸລະກິດ ສະໜອງສິນຄ້າ ແລະ ການບໍລິການທີ່ເປັນມິດກັບສິ່ງແວດລ້ອມ ພ້ອມກັບລາຄາທີ່ເໝາະສົມ ຫຼືບໍ່? | ມີລາຍຊື່ຂອງຜູ້ຈັດສົ່ງສິນຄ້າ ພ້ອມກັບວິທີການທີ່ທ່ານຊຸກຍູ້ພວກເຂົາກ່ຽວກັບ ການສະໜອງສິນຄ້າ ແລະ ການບໍລິການທີ່ເປັນມິດກັບສິ່ງແວດລ້ອມ ພ້ອມກັບລາຄາທີ່ເໝາະສົມ |
| 5.1-12 | ທ່ານໄດ້ມີການຮຽກຮ້ອງໃຫ້ຄູ່ຮ່ວມທຸລະກິດ ມອດຈັກຍານພາຫະນະໃນເວລາທີ່ບໍ່ໄດ້ໃຊ້ງານ ຫຼື ນຳໃຊ້ຍານພາຫະນະທີ່ມີມົນລະພິດຕໍ່າ ຫຼືບໍ່? | ມີລາຍຊື່ຂອງຄູ່ຮ່ວມທຸລະກິດ ພ້ອມກັບບັນທຶກຈຳນວນການຮຽກຮ້ອງ ແລະ ການຕອບຮັບ |
| 5.1-13 ທາງເລືອກ | ທ່ານມີການແລກປ່ຽນສົນທະນາກ່ຽວກັບ ການຈັດສົ່ງສິນຄ້າ, ເວລາການຈັດສົ່ງ, ແລະ ເສັ້ນທາງທີ່ໃຊ້ໃນການຈັດສົ່ງເພື່ອໃຫ້ມີປະສິດທິຜົນຫຼາຍຂຶ້ນ ຫຼືບໍ່? | ຊອກຫາເສັ້ນທາງ ແລະ ເວລາການຈັດສົ່ງເພື່ອຫຼີກລ້ຽງຊ່ວງເວລາທີ່ແອອັດ |
| 5.1-14 | ເມື່ອເປັນໄປໄດ້, ທ່ານໄດ້ມີການແນະນຳໃຫ້ແຂກນຳໃຊ້ຍານພາຫະນະສາທາລະນະ ຫຼືບໍ່? | ສະໜອງຂໍ້ມູນກ່ຽວກັບການນຳໃຊ້ຍານພາຫະນະສາທາລະນະ |
| 5.1-15 | ທ່ານໄດ້ວາງບູລິມະສິດໃນການຈັດຊື້ສິນຄ້າທ້ອງຖິ່ນ ຫຼື ຕາມລະດູການ ຫຼືບໍ່? | ສ້າງລາຍການສິນຄ້າຕາມລະດູການ, ສິນຄ້າ ແລະ ການບໍລິການພາຍໃນທ້ອງຖິ່ນ |
| 5.1-16 | ທ່ານມີການສະໜັບສະໜູນ ຜູ້ປະກອບການທ້ອງຖິ່ນ ແລະ ວິສາຫະກິດເພື່ອສັງຄົມ ໃນການ | ມີລາຍຊື່ ແລະ ຂໍ້ມູນກ່ຽວກັບ ຜູ້ປະກອບການທ້ອງຖິ່ນ ແລະ ວິສາຫະກິດເພື່ອສັງຄົມ ທີ່ທ່ານສະໜັບສະໜູນ |

| | | |
|---|---|---|
| | ຜັດທະນາ ແລະ ຂາຍສິນຄ້າທີ່ຍືນຍົງ ທີ່ເຮັດມາຈາກວັດຖຸດິບພາຍໃນທ້ອງຖິ່ນ ຫຼືບໍ່? | |

2) ສານເຄມີ

| | ມາດຕະຖານ | ຕົວຊີ້ວັດ |
|---|---|---|
| 5.2-1 | ທ່ານໄດ້ຈຳກັດການນຳໃຊ້ຢາຂ້າແມງໄມ້, ຢາຂ້າຫຍ້າ, ແລະ ຝຸ່ນເຄມີ ແລະ ຫັນໄປນຳໃຊ້ທາງເລືອກອື່ນທີ່ເປັນມິດຕໍ່ສິ່ງແວດລ້ອມ ຫຼືບໍ່? | ສ້າງລາຍການ ການຈຳກັດການນຳໃຊ້ຢາຂ້າແມງໄມ້, ຢາຂ້າຫຍ້າ ແລະ ຝຸ່ນເຄມີ ແລະ ຫັນໄປນຳໃຊ້ທາງເລືອກອື່ນທີ່ເປັນມິດຕໍ່ສິ່ງແວດລ້ອມ |
| 5.2-2 | ທ່ານໄດ້ຈຳກັດການນຳໃຊ້ນ້ຳຢາຊັກເຄື່ອງ, ນ້ຳຢາອານະໄມ, ອຸປະກອນອານະໄມທີ່ເປັນສານເຄມີ ແລະ ຫັນໄປນຳໃຊ້ຜະລິດຕະພັນທີ່ເປັນມິດຕໍ່ສິ່ງແວດລ້ອມ ຫຼືບໍ່? | • ສ້າງລາຍການ ການຈຳກັດ ການນຳໃຊ້ນ້ຳຢາຊັກເຄື່ອງ, ນ້ຳຢາອານະໄມ, ອຸປະກອນອານະໄມທີ່ເປັນສານເຄມີ ແລະ ຫັນໄປນຳໃຊ້ຜະລິດຕະພັນທີ່ເປັນມິດຕໍ່ສິ່ງແວດລ້ອມ<br>• ບັນທຶກລາຍການການບຳລຸງຮັກສາສະຖານທີ່ ທີ່ມີສະລອຍນ້ຳ |
| 5.2-3 ທາງເລືອກ | ທ່ານໄດ້ມີການຈັດເກັບນ້ຳຝົນໃນສະຖານທີ່ພັກແຮມຂອງທ່ານ ຫຼືບໍ່? | ຈັດເກັບຈາກຫຼັງຄາ, ຮາງລິນ ແລະ ອື່ນໆ ລົງໃສ່ຖັງນ້ຳໃຫຍ່ |
| 5.2-4 | ທ່ານໄດ້ເຂົ້າຮ່ວມກິດຈະກຳການຮັກສາສິ່ງແວດລ້ອມພາຍໃນທ້ອງຖິ່ນ ບໍ່ວ່າຈະເປັນທາງກົງ ຫຼື ທາງອ້ອມ ຫຼືບໍ່? ຫຼື ມີການສົ່ງເສີມໃຫ້ແຂກເຂົ້າຮ່ວມກິດຈະກຳເຫຼົ່ານັ້ນ ຫຼືບໍ່? | ເຊັ່ນ: ການອານະໄມເຂດສາທາລະນະ, ການປູກປ່າ ແລະ ການຮັກສາທຳມະຊາດ |

## VI. **ຄວາມໃສ່ໃຈຕໍ່ສິ່ງແວດລ້ອມ**

1) ການທ່ອງທ່ຽວແບບນິເວດວິທະຍາ

| | ມາດຕະຖານ | ຕົວຊີ້ວັດ |
|---|---|---|
| 6.1-1 | ທ່ານໄດ້ສະໜອງການທ່ອງທ່ຽວແບບນິເວດວິທະຍາ ຫຼືບໍ່? | ນຳໃຊ້ຜູ້ນຳທ່ຽວຂອງຕົນເອງ, ນຳໃຊ້ຜູ້ນຳທ່ຽວພາຍໃນທ້ອງຖິ່ນ ຫຼື ຈາກພາຍນອກ |

| | | |
|---|---|---|
| 6.1-2 | ທ່ານໄດ້ສະໜອງກິດຈະກຳການຮຽນຮູ້ກ່ຽວກັບທຳມະຊາດພາຍໃນທ້ອງຖິ່ນ, ວັດທະນະທຳ, ປະຫວັດສາດ ແລະ ອື່ນໆ ຫຼືບໍ່? | ນຳໃຊ້ຜູ້ນຳທ່ຽວຂອງຕົນເອງ, ນຳໃຊ້ຜູ້ນຳທ່ຽວພາຍໃນທ້ອງຖິ່ນ ຫຼື ຈາກພາຍນອກ |
| 6.1-3 | ທ່ານມີກົນໄກ ເພື່ອປັບປຸງຄຸນະພາບຂອງແຜນການທ່ອງທ່ຽວ ແລະ ການຕີຄວາມໝາຍ ທີ່ທ່ານສະໜອງໃຫ້ແຂກ ຫຼືບໍ່? | • ອະທິບາຍວິທີການປັບປຸງ ເຊັ່ນ: ການນຳໃຊ້ຜູ້ຊ່ຽວຊານ, ການໄປຢ້ຽມຢາມ ແລະ ແລກປ່ຽນຄວາມຮູ້ກັບສະຖານທີ່ພັກແຮມອື່ນ ທີ່ໃຫ້ການບໍລິການທີ່ຄ້າຍຄືກັນ<br>• ການຕີຄວາມຫມາຍທີ່ລວມເອົາ ການອະທິບາຍການປະພຶດທີ່ເໝາະສົມ ໃນຂະນະທີ່ໄປຢ້ຽມຢາມສະຖານທີ່ທາງວັດທະນະທຳ ແລະ ທຳມະຊາດ ເຊັ່ນ: ຫຼັກຈັນຍາບັນ/ຫຼັກການປະພຶດໂຕ |
| 6.1-4 | ໃນລະຫວ່າງການສະໜອງການທ່ອງທ່ຽວ ທ່ານໄດ້ນຳໃຊ້ອຸປະກອນຕ່າງໆ ເຊັ່ນ: ກ່ອງອາຫານຂອງແຂກ ທີ່ສາມາດກັບມາໃຊ້ຄືນໄດ້ ຫຼືບໍ່? | ບໍ່ນຳໃຊ້ປາສຕິກທີ່ໃຊ້ຄັ້ງດຽວແລ້ວຖິ້ມ, ຫັນໄປນຳໃຊ້ໃບຕອງ ຫຼື ບັ້ງໄມ້ໄຜ່ |

2) ຄວາມໃສ່ໃຈຕໍ່ກັບສະພາບອ້ອມຂ້າງ

| | **ມາດຕະຖານ** | **ຕົວຊີ້ວັດ** |
|---|---|---|
| 6.2-1 | ທ່ານໄດ້ມີການຕິດຕັ້ງລະບົບໄຟທີ່ບໍ່ລົບກວນການໃຊ້ຊີວິດຂອງສັດທີ່ໃຊ້ຊີວິດກາງຄືນ ຫຼືບໍ່? | ລະບົບໄຟບໍ່ໄດ້ຖືກຕິດຕັ້ງແບບສ່ອງຂຶ້ນຟ້າ, ມີການຕິດຕັ້ງຜ້າກັ້ງທີ່ໜາພໍເພື່ອບັງແສງໄຟທີ່ອອກມາຈາກຫ້ອງພັກ ຫຼື ຕົວອາຄານ |
| 6.2-2 | ສວນ ຫຼື ໜານຜັກພາຍໃນສະຖານທີ່ພັກແຮມຂອງທ່ານປະກອບດ້ວຍພືດພັນພື້ນເມືອງ ຫຼືບໍ່? ແລະ ມີການຄວບຄຸມການປູກພືດຮຸກຮານ ຫຼື ສາຍພັນແປກໃໝ່ ຫຼືບໍ່? | ສ້າງລາຍຊື່ຂອງພືດພັນຕ່າງໆທີ່ປູກພາຍໃນສະຖານທີ່ພັກແຮມ ໂດຍສະເພາະພືດຮຸກຮານ ຫຼື ສາຍພັນແປກໃໝ່ ພ້ອມທັງແຜນການການບໍລິຫານ |
| 6.2-3 | ທ່ານມີຄຳແນະນຳຢ່າງລະອຽດກ່ຽວກັບການໃຫ້ອາຫານສັດປ່າ ທີ່ປະຕິບັດຕາມແນວທາງແຫ່ງຊາດ ແລະ ສາກົນ ຫຼືບໍ່? | ຫ້າມໃຫ້ອາຫານສັດປ່າ, ແຕ່ຖ້າຕ້ອງໃຫ້ອາຫານເພື່ອດຶງດູດຄວາມສົນໃຈ ແມ່ນຕ້ອງມີກົດລະບຽບຢ່າງລະອຽດເພື່ອຫຼຸດຜ່ອນຜົນກະທົບດ້ານລົບ |

| | | |
|---|---|---|
| 6.2-4 ທາງເລືອກ | ທ່ານມີກົດລະບຽບກ່ຽວກັບການນຳເອົາສັດລ້ຽງມາພັກອາໃສພາຍໃນສະຖານທີ່ພັກແຮມ ທີ່ປະຕິບັດຕາມແນວທາງແຫ່ງຊາດ ແລະ ສາກົນ ຫຼືບໍ? | ອານຸຍາດໃຫ້ການນຳເອົາສັດລ້ຽງມາພັກອາໃສພາຍໃນສະຖານທີ່ພັກແຮມ ເມື່ອມີກົດລະບຽບຢ່າງລະອຽດເພື່ອຫຼຸດຜ່ອນຜົນກະທົບດ້ານລົບ |
| 6.2-5 | ທ່ານແນ່ໃຈຫຼືບໍ ວ່າຊະນິດພັນສັດປ່າ ທີ່ຖືກເກັບມາຈາກປ່າ ເພື່ອບໍລິໂພກ, ສະແດງ, ຂາຍ ຫຼືຄ້າຂາຍແລກປ່ຽນນັ້ນ ເປັນສ່ວນໜຶ່ງຂອງກິດຈະກຳທີ່ຖືກກຳນົດໄວ້ ຕາມກົດໝາຍແຫ່ງຊາດ ແລະ ສາກົນ, ພ້ອມທັງແນ່ໃຈວ່າການນຳໃຊ້ແມ່ນມີຄວາມຍືນຍົງ | ລາຍຊື່ຂອງຊະນິດສັດປ່າທີ່ຖືກນຳໃຊ້ຕາມເປົ້າໝາຍ ເພື່ອຮັກສາຈຳນວນປະຊາກອນສັດປ່າທີ່ສົມບູນ |
| 6.2-6 | ທ່ານແນ່ໃຈຫຼືບໍ ວ່າບໍ່ມີການຈັບ, ກັກຂັງ ຫຼື ເຮັດການສືບພັນສັດປ່າ ນອກຈາກກິດຈະກຳທີ່ຖືກກຳນົດໄວ້ຢ່າງເໝາະສົມ ຕາມກົດໝາຍແຫ່ງຊາດ ແລະ ສາກົນ, ແລະ ແນ່ໃຈວ່າສາຍພັນສັດປ່າແມ່ນຖືກເກັບຮັກສາໂດຍເຈົ້າໜ້າທີ່ທີ່ກ່ຽວຂ້ອງ ພ້ອມກັບອຸປະກອນ ແລະ ສະຖານທີ່ເກັບຮັກສາທີ່ມີມາດຕະຖານ | ສະຖານທີ່ພັກອາໃສ, ການດູແລຮັກສາ ແລະ ການຮັບມືກັບພັນສັດປ່າ ແມ່ນໄດ້ມາດຕະຖານສູງສຸດເພື່ອສະຫວັດດີການຂອງສັດປ່າ |
| 6.2-7 | ທ່ານໄດ້ປະຕິບັດຕາມຄຳແນະນຳ ຫຼື ກົດລະບຽບໃນການໄປຢ້ຽມຢາມສະຖານທີ່ທາງວັດທະນະທຳ, ທຳມະຊາດ ແລະ ປະຫວັດສາດ ເພື່ອຫຼຸດຜ່ອນຜົນກະທົບດ້ານລົບ ແລະ ເພີ່ມຄວາມເພິ່ງພໍໃຈຂອງແຂກ ຫຼືບໍ? | ນຳໃຊ້ຄຳແນະນຳ ຫຼື ກົດລະບຽບທີ່ຖືກວາງອອກຢ່າງເຄັ່ງຄັດ |
| 6.2-8 | ທ່ານໄດ້ປະກອບສ່ວນໃນການປ້ອງກັນ, ປົກປັກຮັກສາ, ແລະ ເສີມຂະຫຍາຍ ຊັບສິນທ້ອງຖິ່ນ, ສະຖານທີ່ ແລະ ປະເພນີທີ່ມີຄວາມໝາຍທາງດ້ານປະຫວັດສາດ, ບູຮານນະຄະດີ, ວັດທະນະທຳ ແລະ ຈິດວິນຍານ ຫຼືບໍ? | ຂຽນລາຍງານກິດຈະກຳທີ່ທ່ານໄດ້ປະກອບສ່ວນ |
| 6.2-9 | ທ່ານໄດ້ປະກອບສ່ວນເຂົ້າໃນການຄຸ້ມຄອງອານາເຂດ ທີ່ເໝາະສົມເພື່ອສະໜັບສະໜູນ ຊີວະນາໆພັນທີ່ມີຢູ່ໃນເຂດສະຖານທີ່ພັກແຮມຂອງທ່ານ ຫຼືບໍ? | ສ້າງລາຍການຂອງລະບົບຄວາມຍືນຍົງໂດຍລວມໃນການສະໜັບສະໜູນ ຊີວະນາໆພັນ ບໍ່ພຽງແຕ່ທາງດ້ານການເງິນ ຫຼື ການນຳເອົາພັນພື້ນເມືອງເຂົ້າມາ |

| | | |
|---|---|---|
| 6.2-10 | ທ່ານແນ່ໃຈບໍ ວ່າການພົວພັນກັບສັດປ່ານັ້ນບໍ່ໄດ້ສ້າງຜົນກະທົບດ້ານລົບ ຕໍ່ກັບພຶດຕິກຳຂອງປະຊາກອນສັດປ່າ | ລາຍການກິດຈະກຳການພົວພັນກັບສັດປ່າ ແລະ ການປະຕິບັດເພື່ອຫຼຸດຜ່ອນຜົນກະທົບ |
| 6.2-11 | ທ່ານໄດ້ຫຼີກລ້ຽງການລົບກວນ ລະບົບນິເວດວິທະຍາ, ລວມທັງການພົວພັນກັບສັດປ່າ ໂດຍມີການຄຳນຶງເຖິງຜົນກະທົບທີ່ສະສົມ ຫຼືບໍ? | ລາຍການກິດຈະກຳການພົວພັນກັບລະບົບນິເວດວິທະຍາ, ແລະ ການປະຕິບັດເພື່ອຫຼຸດຜ່ອນຜົນກະທົບ |
| 6.2-12 | ທ່ານໄດ້ພະຍາຍາມຟື້ນຟູ ຫຼື ຊົດເຊີຍ ໃຫ້ແກ່ລະບົບນິເວດວິທະຍາທີ່ຖືກລົບກວນ ຫຼືບໍ? | ລາຍການກິດຈະກຳກ່ຽວກັບການຟື້ນຟູ ຫຼື ການຊົດເຊີຍ, ພ້ອມທັງຜົນໄດ້ຮັບ |
| 6.2-13 | ທ່ານໄດ້ມີການປະຕິບັດເພື່ອຫຼຸດຜ່ອນມົນລະພິດທີ່ມາຈາກສຽງ, ແສງສະຫວ່າງ, ການໄຫຼວຽນຂອງດິນ, ການເຊາະເຈື່ອນ, ແລະ ການປົນເປື້ອນທາງອາກາດ ແລະ ດິນ ຫຼືບໍ? | • ສ້າງລາຍການກິດຈະກຳທີ່ບັນລຸການຫຼຸດຜ່ອນທີ່ກ່າວມາ<br>• ກຳນົດສາເຫດທີ່ອາດຈະເກີດຂຶ້ນ ແລະ ການປະຕິບັດເພື່ອບັນລຸການຫຼຸດຜ່ອນ<br>• ລາຍການ ການປະຕິບັດທີ່ເຮັດຢູ່ເພື່ອບັນລຸການຫຼຸດຜ່ອນ ລວມທັງວິທີການເກັບຮັກສານ້ຳມັນທີ່ມີຄວາມຮັບຜິດຊອບ, ການນຳໃຊ້ຄືນ, ແລະ ການຈຳກັດນ້ຳມັນເຄື່ອງ ເພື່ອຮັບປະກັນວ່າບໍ່ມີນ້ຳມັນຮົ່ວລົງໃນນ້ຳ (ໜ້າດິນ) |

3) ການມີສ່ວນຮ່ວມກັບຊຸມຊົນ

| | **ມາດຕະຖານ** | **ຕົວຊີ້ວັດ** |
|---|---|---|
| 6.3-1 | ເຈົ້າຂອງທຸລະກິດແມ່ນ ຜູ້ທີ່ອາໄສຢູ່ພາຍໃນທ້ອງຖິ່ນ ຫຼື ບຸກຄົນທີ່ລົງທະບຽນຢ່າງຖືກຕ້ອງຕາມກົດໝາຍໃນການດຳເນີນທຸລະກິດໃນທ້ອງຖິ່ນ ຫຼືບໍ? | ໃບລົງລະບຽນພາຍໃນທ້ອງຖິ່ນ |
| 6.3-2 | ທ່ານໄດ້ສະໜອງໂອກາດໃນການເຮັດວຽກ, ການຝຶກງານ ແລະ ໂອກາດຄວາມກ້າວໜ້າໃນວຽກງານ ໃຫ້ແກ່ປະຊາກອນພາຍໃນທ້ອງຖິ່ນ ຫຼືບໍ? | • ໂດຍບໍ່ມີການຈຳແນກເພດ, ເຊື້ອຊາດ, ສາດສະໜາ, ສະພາບຮ່າງກາຍ ແລະ ອື່ນໆ<br>• ໃຫ້ບຸລິມະສິດແກ່ນັກສຶກສາພາຍໃນທ້ອງຖິ່ນ |
| 6.3-3 | ທ່ານໄດ້ມີການມອບຜົນກຳໄລຄືນໃຫ້ແກ່ຊຸມຊົນທ້ອງຖິ່ນ ຫຼື ການລິເລີ່ມດ້ານສິ່ງແວດລ້ອມ ຫຼືບໍ? | ເຊັ່ນ: ໂຄງການກ່ຽວກັບການຮັບມືກັບສະພາບອາກາດທີ່ປ່ຽນແປງ ແລະ ການປົກປັກຮັກສາທຳມະຊາດອ້ອມຂ້າງ |

| | | |
|---|---|---|
| 6.3-4 | ພາຍໃນຊຸມຊົນທ້ອງຖິ່ນມີກິດລະບຽບ ຫຼື ຫຼັກການປະພຶດໂຕ ເພື່ອບໍລິຫານ ແລະ ສິ່ງເສີມ ກິດຈະກຳພາຍໃນທ້ອງຖິ່ນ ຫຼືບໍ? | ເຊັ່ນ: ການຮັບຮູ້ຂອງຊຸມຊົນກ່ຽວກັບກົດລະບຽບການຫຼົ້ນນ້ຳ ໃນເຂດທີ່ ຊຸມຊົນພື້ນເມືອງນຳໃຊ້ໃນການເຮັດພິທີສຳຄັນ |
| 6.3-5 | ທ່ານໄດ້ດຶງເອົາຊຸມຊົນທ້ອງຖິ່ນເຂົ້າມາມີສ່ວນຮ່ວມໃນກິດຈະກຳສິ່ງເສີມຄວາມຍືນຍົງ ຫຼືບໍ? | ກົດລະບຽບການປະຕິບັດໂຕໄດ້ຖືກສ້າງຂຶ້ນ ໂດຍການຮັບຮູ້ ແລະ ຮ່ວມມືຈາກຊຸມຊົນທ້ອງຖິ່ນ |
| 6.3-6 | ທ່ານແນ່ໃຈບໍວ່າ ຊຸມຊົນທ້ອງຖິ່ນສາມາດໃຊ້ຊີວິດປະຈຳວັນຂອງເຂົາເຈົ້າ (ເຖິງຈະມີກິດຈະກຳຂອງທ່ານ) ໄດ້ເປັນປົກກະຕິ ລວມເອົາ ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນນ້ຳ, ສິດທາງດ້ານການຂົນສົ່ງ, ຍານພາຫະນະ ແລະ ການຢູ່ອາໃສ | ເຊັ່ນ: ຫາດຕໍ່ໜ້າສະຖານທີ່ພັກແຮມ ບໍ່ໄດ້ປິດກັ້ນການເຂົ້າໄປນຳໃຊ້ຂອງປະຊາຊົນທ້ອງຖິ່ນ |
| 6.3-7 | ການຂະຫຍາຍ ຫຼື ການໄດ້ມາຂອງຊັບສິນ ໄດ້ນຳໄປສູ່ ຫຼື ຈະນຳໄປສູ່ ການຍົກຍ້າຍຖິ່ນຖານແບບບໍ່ສະໝັກໃຈຂອງປະຊາຊົນທ້ອງຖິ່ນ ຫຼືບໍ? | ຮັບປະກັນບໍ່ໃຫ້ມີການຍົກຍ້າຍຖິ່ນຖານແບບບໍ່ສະໝັກໃຈຂອງປະຊາຊົນທ້ອງຖິ່ນ |
| 6.3-8 ທາງເລືອກ | ເຈົ້າຂອງສະຖານທີ່ພັກອາໄສ ອາໄສຢູ່ໃນສະຖານທີ່/ພື້ນທີ່/ຊຸມຊົນ ດັ່ງກ່າວ ຫຼືບໍ? | |

4) ພະລັງງານ

| | ມາດຕະຖານ | ຕົວຊີ້ວັດ |
|---|---|---|
| 6.4-1 | ທ່ານໄດ້ມີລາຍການຂອງເຄື່ອງໃຊ້ພາຍໃນສະຖານທີ່ພັກແຮມຂອງທ່ານ ທີ່ນຳໃຊ້ພະລັງງານ ຫຼືບໍ? | ສ້າງລາຍການເຄື່ອງໃຊ້ທີ່ນຳໃຊ້ພະລັງງານ ແລະ ແຍກເປັນຂົງເຂດຢ່າງ ເຊັ່ນ: ໃນຫ້ອງພັກ, ໃນສວນ, ໃນຕົວອາຄານ |
| 6.4-2 | ທ່ານໄດ້ມີການວັດແທກປະລິມານການນຳໃຊ້ພະລັງງານຂອງອຸປະກອນແຕ່ລະອັນ ຫຼືບໍ? | ມີການວັດແທກຈຳນວນພະລັງງານທັງໝົດ ແລະ ສະເພາະຂອງແຕ່ລະອຸປະກອນ ເພື່ອເບິ່ງຊື່ວ່າອັນໃດນຳໃຊ້ພະລັງງານຫຼາຍທີ່ສຸດ ເຊັ່ນ: ຕູ້ເຢັນ ຫຼື ຕູ້ແຊ່ແຂງທີ່ເປີດໃຊ້ 24ຊມ |
| 6.4-3 | ທ່ານໄດ້ມີການເກັບກຳ ແລະ ວັດແທກ ການນຳໃຊ້ພະລັງງານພາຍໃນສະຖານທີ່ພັກແຮມຂອງທ່ານ ຫຼືບໍ? | ມີການວັດແທກທຸກເດືອນ ແລະ ເກັບຂໍ້ມູນເພື່ອເບິ່ງແນວໂນ້ມການນຳໃຊ້ |

| | | |
|---|---|---|
| 6.4-4 | ທ່ານມີແຜນການປະຕິບັດ ແລະ ເປົ້າໝາຍທີ່ຊັດເຈນກ່ຽວກັບ ການນໍາໃຊ້ພະລັງງານທີ່ນໍາກັບມາໃຊ້ໄດ້ໃໝ່ ແລະ ໄດ້ລົງມືປະຕິບັດ ຫຼືບໍ່? | ຈາກຂໍ້ມູນການວັດແທກ, ມີການສ້າງແຜນ ແລະ ລົງມືປະຕິບັດ |
| 6.4-5 | ທ່ານໄດ້ມີການຕິດຕາມກວດກາ ແລະ ພິສູດຜົນສໍາເລັດຂອງການຮັກສາພະລັງງານ ໂດຍການລົງມືປະຕິບັດຕາມແຜນທີ່ວາງອອກ ຫຼືບໍ່? | ພິສູດວ່າການຮັກສາພະລັງງານ ເປັນໄປຕາມແຜນທີ່ວາງອອກ |

5) ການອອກແບບ, ການກໍ່ສ້າງ ແລະ ການປະຕິບັດງານ

| | **ມາດຕະຖານ** | **ຕົວຊີ້ວັດ** |
|---|---|---|
| 6.5-1 | ການໄດ້ມາຂອງທີ່ດິນ, ຊັບສິນ ແລະ ຊັບພະຍາກອນນໍ້າ ແມ່ນຖືກກົດໝາຍ ແລະ ສອດຄ່ອງກັບສິດທິຂອງ ຊຸມຊົນທ້ອງຖິ່ນ ແລະ ຂອງຊົນເຜົ່າພື້ນເມືອງ ຫຼືບໍ່? ລວມເຖິງການທີ່ໄດ້ຮັບຄວາມຍິນຍອມໂດຍສະໝັກໃຈລ່ວງໜ້າ ແລະ ໄດ້ຮັບການແຈ້ງຂໍ້ມູນຄົບຖ້ວນ ຫຼືບໍ່? | |
| 6.5-2 | ການໃຊ້ທີ່ດິນ ເປັນໄປລະບົບແບ່ງເຂດພື້ນທີ່ທ້ອງຖິ່ນ ແລະ ອີງຕາມກົດໝາຍ ແລະ ຂໍ້ບັງຄັບ ກ່ຽວກັບພື້ນທີ່ຄຸ້ມຄອງ ຫຼື ເຂດມໍລະດົກ ຫຼືບໍ່? | ກວດສອບກັບສະຖາບັນຂອງລັດຖະບານ ກ່ຽວກັບກົດລະບຽບ |
| 6.5-3 | ການອອກແບບ, ການກໍ່ສ້າງ, ການສ້ອມແປງ, ການປະຕິບັດງານ, ແລະ ການຮື້ຖອນ ແມ່ນສອດຄ່ອງກັບລະບົບການແບ່ງເຂດພື້ນທີ່ທ້ອງຖິ່ນ ແລະ ອີງຕາມກົດໝາຍ ແລະ ກົດລະບຽບ ທີ່ກ່ຽວຂ້ອງກັບ ພື້ນທີ່ຄຸ້ມຄອງ ຫຼື ພື້ນທີ່ອ່ອນໄຫວ ເຊັ່ນ: ເຂດມໍລະດົກ | ກວດສອບກັບສະຖາບັນຂອງລັດຖະບານ ກ່ຽວກັບກົດລະບຽບ |
| 6.5-4 | ການວາງແຜນຜັງ, ການອອກແບບ ແລະ ການສ້ອມແປງຂອງສະຖານທີ່ພັກແຮມ ໄດ້ຄໍານຶງເຖິງຄວາມຈຸ ແລະ ຄວາມສົມບູນ ຂອງມໍລະດົກທາງທໍາມະຊາດ ແລະ ວັດທະນະທໍາອ້ອມຂ້າງ ຫຼືບໍ່? | ກວດສອບວ່າແຕ່ລະອົງປະກອບບໍ່ໄດ້ສ້າງຜົນກະທົບໃຫ້ແກ່ທໍາມະຊາດ ແລະ ວັດທະນະທໍາອ້ອມຂ້າງ |

| | | |
|---|---|---|
| 6.5-5 | ການກໍ່ສ້າງ, ການສ້ອມແປງ ແລະ ການຮື້ຖອນ ແມ່ນອີງໃສ່ຄວາມເໝາະສົມ ແລະ ຫຼັກການອາຄານສີຂຽວຂອງທ້ອງຖິ່ນ ຫຼືບໍ? | ສະຖານທີ່ຍືນຍົງ: ວິທີການນີ້ເພີ່ມປະສິດທິພາບຂອງການນໍາໃຊ້ພື້ນທີ່ດິນ ແລະ ການພັດທະນາ ເພື່ອຫຼຸດຜ່ອນຜົນກະທົບດ້ານລົບ ແລະ ຫຼຸດຜ່ອນຮ່ອງຮອຍຂອງອາຄານທີ່ມີຜົນຕໍ່ກັບລະບົບນິເວດວິທະຍາ<br><br>ພະລັງງານທີ່ມີປະສິດທິພາບ: ເຕັກນິກນີ້ແນ່ໃສ່ການກໍານົດເປົ້າໝາຍ ທີ່ຄໍານຶງເຖິງ ການໃຊ້ງານທີ່ມີຈຸດປະສົງ, ການຄອບຄອງ ແລະ ການນໍາໃຊ້ພະລັງງານຕ່າງໆ ສໍາລັບໂຄງການກໍ່ສ້າງໃໝ່ ແລະ ການປັບປຸງ<br><br>ການນໍາໃຊ້ນໍ້າທີ່ມີປະສິດທິພາບ: ເຕັກນິກນີ້ສຸມໃສ່ການຫຼຸດຜ່ອນການນໍາໃຊ້ນໍ້າຈືດ ແລະ ຫຼຸດຜ່ອນການຜະລິດນໍ້າເສຍຜ່ານການເພີ່ມປະສິດທິພາບຂອງພູມສັນຖານ, ການຈັດເກັບນໍ້າຝົນ, ການນໍາໃຊ້ນໍ້າຄືນໃໝ່ ແລະ ລະບົບການບັດນໍ້າເສຍ<br><br>ວັດສະດຸຂອງອາຄານ: ນໍາໃຊ້ວັດສະດຸກໍ່ສ້າງ ແລະ ຊັບພະຍາກອນທີ່ຍືນຍົງ, ວັດສະດຸກໍ່ສ້າງສີຂຽວໄດ້ຊ່ວຍຫຼຸດຜ່ອນການສະກັດ, ການປຸງແຕ່ງ, ການຂົນສົ່ງ, ສິ່ງເສດເຫຼືອ ແລະ ການຊົມໃຊ້<br><br>ຄຸນະພາບຂອງສະພາບແວດລ້ອມພາຍໃນອາຄານ: ຂະບວນການນີ້ໄດ້ຊ່ວຍເສີມສ້າງໃຫ້ຊຸມຊົນມີຄວາມຍືນຍົງ ໂດຍຜ່ານການ ລະບາຍອາກາດ ແລະ ຄວາມຮ້ອນ, ການຄວບຄຸມຄວາມຊຸ່ມ, ແສງແດດ, ການຄວບຄຸມຄວັນຢາສູບ ແລະ ປົກປ້ອງຄຸນະພາບອາກາດພາຍໃນອາຄານ ໃນລະຫວ່າງການກໍ່ສ້າງ |
| 6.5-6 | ສະຖານທີ່ພັກແຮມຂອງທ່ານໄດ້ມີ ການສະໜອງການເຂົ້າເຖິງ ແລະ ໃຫ້ຂໍ້ມູນທີ່ກ່ຽວຂ້ອງໃຫ້ແກ່ບຸກຄົນທີ່ມີຄວາມຕ້ອງການພິເສດ ຫຼືບໍ? | ສ້າງລາຍການຂອງບກຄົນທີ່ອາດຈະຕ້ອງການການຊ່ວຍເຫຼືອພິເສດ ແລະ ຂໍ້ມູນທີ່ກ່ຽວຂ້ອງ ເຊັ່ນ: ການເຂົ້າເຖິງລົດເຂັນ |
| 6.5-7 | ສະຖານທີ່ພັກແຮມຂອງທ່ານໄດ້ໃຫ້ຄຸນຄ່າ ແລະ ມີການປະສົມປະສານອົງປະກອບແບບດັ່ງເດີມ ແລະ ທັນສະໄໝ ເຊັ່ນ ສິລະປະທ້ອງຖິ່ນ, ສະຖາປັດຕິຍະກໍາ, ຫຼື ວັດທະນະທໍາ ເຂົ້າໃນການອອກ | ລາຍການຂອງອົງປະກອບແບບປະສົມປະສານ ແລະ ລາຍລະອຽດ |

| | | |
|---|---|---|
| | ແບບ, ການຕົກແຕ່ງ, ການປຸງແຕ່ງອາຫານ ແລະ ອື່ນໆ ຫຼືບໍ? | |
| 6.5-8 | ສະຖານທີ່ພັກແຮມຂອງທ່ານ ໄດ້ເຄົາລົບສິດທິດ້ານຊັບສິນທາງປັນຍາຂອງຊຸມຊົນທ້ອງຖິ່ນ ຫຼືບໍ? | ຮູບແບບທີ່ນຳໃຊ້ພາຍໃນອາຄານ ແລະ ການປະຕິບັດງານ ແມ່ນບໍ່ໄດ້ລ່ວງລະເມີດສິດທິດ້ານຊັບສິນທາງປັນຍາຂອງຊຸມຊົນ |
| 6.5-9 | ສະຖານທີ່ພັກແຮມ ແລະ ບໍລິເວນອ້ອມຂ້າງປອດໄພ ຫຼືບໍ? ຕົວຢ່າງ ມີເຈົ້າໜ້າທີ່ຮັກສາຄວາມປອດໄພ, ກ້ອງວົງຈອນປິດ, ລະບົບຕິດຕາມ, ກຸນແຈລອກ | |

6) ອົງປະກອບອື່ນໆ

| | ມາດຕະຖານ | ຕົວຊີ້ວັດ |
|---|---|---|
| 6.6-1 | ທ່ານໄດ້ມີການຕິດປະກາດໃນຫ້ອງພັກ ຫຼື ເຂດສ່ວນລວມ ຫຼື ແຈ້ງໃຫ້ແຂກຮັບຊາບກ່ຽວກັບ ທຳມະຊາດ ແລະ ວັດທະນະທຳພາຍໃນທ້ອງຖິ່ນ, ເລື່ອງຄວາມປອດໄພ, ການນຳກັບມາໃຊ້ໃໝ່, ການຮັກສາພະລັງງານ ແລະ ອື່ນໆ ຫຼືບໍ? | ອະທິບາຍວິທີການປະກາດ ຫຼື ແຈ້ງແຂກ |
| 6.6-2 | ທ່ານໄດ້ມີການຕິດປະກາດໃນຫ້ອງພັກ ຫຼື ເຂດສ່ວນລວມ ຫຼື ແຈ້ງໃຫ້ແຂກຮັບຊາບກ່ຽວກັບ ແນວທາງທີ່ເໝາະສົມ ໃນການໄປຢ້ຽມຢາມເຂດທຳມະຊາດ, ຊຸມຊົນທ້ອງຖິ່ນ ແລະ ເຂດມໍລະດົກທາງວັດທະນະທຳ ຫຼືບໍ? | ອະທິບາຍວິທີການປະກາດ ຫຼື ແຈ້ງແຂກ |
| 6.6-3 | ທ່ານໄດ້ພະຍາຍາມປຸງແຕ່ງອາຫານໂດຍການນຳໃຊ້ວັດຖຸດິບຈາກທ້ອງຖິ່ນ ຫຼື ສູດດັ້ງເດີມ ເພື່ອສົ່ງເສີມການປຸງແຕ່ງອາຫານທ້ອງຖິ່ນ ຫຼືບໍ? | ໝາຍເຫດໃນລາຍການອາຫານວ່າ ອາຫານຈານໃດແມ່ນໄດ້ແຮງບັນດານໃຈມາຈາກທ້ອງຖິ່ນ. ແຈ້ງໃຫ້ຮູ້ປະລິມານຂອງການນຳໃຊ້ວັດຖຸດິບທ້ອງຖິ່ນ |
| 6.6-4 | ອັດຕາສ່ວນລະຫວ່າງ ອາຈານສອນດຳນ້ຳ ແລະ ຜູ້ຮຽນ ຫຼື ຜູ້ດຳນ້ຳ ແມ່ນມີຄວາມເໝາະສົມ ເພື່ອຮັບປະກັນການເບິ່ງແຍງພຶດຕິກຳ ຂອງນັກດຳນ້ຳໄດ້ຢ່າງເໝາະສົມ ແລະ ທົ່ວເຖິງ ຫຼືບໍ? | ອັດຕາສ່ວນລະຫວ່າງ ອາຈານສອນດຳນ້ຳ ແລະ ຜູ້ຮຽນ ຫຼື ຜູ້ດຳນ້ຳ |

| | | |
|---|---|---|
| 6.6-5 ທາງເລືອກ | ທ່ານໄດ້ຂາຍອາຫານທ້ອງຖິ່ນ, ຫັດຖະກຳ ແລະ ສິນຄ້າທ້ອງຖິ່ນ ພາຍໃນຮ້ານຂາຍເຄື່ອງຂອງສະຖານທີ່ພັກແຮມ ຫຼືບໍ? | ຖ້າມີ, ໃຫ້ເຮັດລາຍການຈຳນວນເຄື່ອງທີ່ຂາຍພາຍໃນຮ້ານ |
| 6.6-6 ທາງເລືອກ | ທ່ານມີການຖະແຫຼງການປະຕິບັດຕາມແນວທາງຂອງ Asian Ecotourism Network ໃນເວບໄຊ້ ຂອງທ່ານ ຫຼືບໍ? | ແບບຢ່າງແມ່ນສາມາດຫາໄດ້ໃນ https:www.asianecotourism.org/ |
| 6.6-7 | ເມື່ອໄດ້ຮັບແຈ້ງລ່ວງໜ້າ, ທ່ານສາມາດປຸງແຕ່ງອາຫານໃຫ້ແກ່ບຸກຄົນທີ່ມີອາການແພ້ອາຫານບາງປະເພດ, ບຸກຄົນທີ່ບໍລິໂພກແຕ່ຜັກ ຫຼືເຫດຜົນທາງສາດສະໜາ ຫຼືບໍ? | ລາຍການອາຫານທີ່ສາມາດປຸງແຕ່ງໄດ້ |